ເມສາຫຼາຍຂວບເຂົ້າ ສິບເກົ້າແມ່ນວັນດີ
ກິນນະລີນາງເທີນ ເວີ່ນມາຈາກເມືອງຟ້າ
ມາເນົາໃນຄອງຖ້ຳ ຄັນມານດາຜູ້ປະເສີດ
ນາງຂັນເງິນເກີດມື້ນີ້ ມີບຸນລົ້ນເລີດປະມານ ທ່ານເອີຍ

ນັບຕັ້ງແຕ່ມື້ນັ້ນ ເວລາຜ່ານກາຍມາ
ເຖິງວັນມານດາເຈັບ ປວດອຸທອນຄືວັນນີ້
ຢາກເຫັນບຸດຕີນ້ອຍ ຈົນແຮງພອຍລ້າຫຼ່ອຍ
ນາງນ້ອຍຕົກຈາກທ້ອງ ສຽງ ແງ ຮ້ອງແມ່ຊື່ນໃຈ ແທ້ເດີ

ວັນນີ້ດອນຈິ່ງໄດ້ ຄິດຮ່ຳຄະນຶງຫາ ເອື້ອຍເອີຍ
ທັງບິດາມານດາ ຄ່າສູງເໜືອເກົ້າ
ເອື້ອຍຂັນເງິນ ຂໍຢ່າມີຄວາມເສົ້າ ເຫງົາໃຈໃຫ້ເຫີນຫ່າງ
ໃຫ້ເອື້ອຍສຸຂຢູ່ສ້າງ ສະບາຍບ້າງຕລອດໄປ

ຄອບຄົວເອື້ອຍຈິ່ງໄດ້ ພົບແຕ່ຄວາມສຸຂ
ອັນຕະລາຍພັຍທຸກ ຢ່າມີມາໃກ້
ຂໍໃຫ້ຈິດໃຈເຫຼື້ອມ ເໝືອນມະນີອັນມີຄ່າ
ພອນທິພລົງຈາກຟ້າ ໄຫຼມາເຂົ້າຄູ່ສູ່ທາງ ສາທຸ

ຂໍໃຫ້ສຸຂຢູ່ສ້າງ ພະລັງຮ່ວມກັບສາມີ
ແລະບຸດຕີທັງສອງ ຈິ່ງບອກນອນສອນໄດ້

ຝູງຫມູ່ໄພຍພັຍຮ້າຍ ກາຍທາງມາກໍໃຫ້ຜ່ານ
ຈົ່ງສົດຊື່ນຕລອດການ ສຸຂສຳຣານຕຣາບຊົ່ວຟ້າ ໃນວັນກ້າມື້ເກີດດີ ເອື້ອຍເອີຍ

ຈາກ ນ້ອງສາວຫຼ້າ ສາວຫຼັກເຈັດ